**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ

ຄະນະວິຊາການຊ່ວຍວຽກສາມລ້າງ ນະຄອນຫລວງວຽງຈັນ, ວັນທີ: **19/11/2012**

# ບົດບັນທຶກ

## ການແບ່ງຄວາມຮັບຜິດຊອບ ເພື່ອຈັດຕັ້ງເຮັດທົດລອງສາມສ້າງສໍາລັບຂົງເຂດຂົນສົ່ງ ລະຫວ່າງກົມຂົນສົ່ງ, ພະແນກ ຍທຂ ນະຄອນຫລວງ ແລະຫ້ອງການ ຍທຂ ເມືອງທົດລອງ

- ອີງຕາມມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15/2/2012.
- ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 16/ນຍ, ລົງວັນທີ 15/6/2012.
- ອີງຕາມຄໍາສັ່ງແນະນໍາຂອງລັດຖະມົນຕີວ່າການ, ສະບັບເລກທີ 15562/ຍທຂ, ລົງວັນທີ 17/9/2012.

I. **ກົມຂົນສົ່ງ ຮັບຜິດຊອບ:**

1. ຫັນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະຄໍາສັ່ງຂອງຂັ້ນເທິງ ກ່ຽວກັບວຽກຂົນສົ່ງທາງບົກ, ການຄຸ້ມຄອງຍານພາຫະນະກົນຈັກ, ການຈະລາຈອນທາງບົກ ແລະການຂັບຂີ່ ໃຫ້ກາຍເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະໂຄງການໃນແຕ່ລະໄລຍະ, ຊີ້ນໍາການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລະມີປະສິດທິພາບສູງ.
2. ສ້າງ ແລະປັບປຸງບັນດາກົດໝາຍ, ຂໍ້ຕົກລົງ, ລະບຽບການ, ມາດຕະຖານເຕັກນິກ ແລະກົນໄກໃນການຄຸ້ມຄອງວຽກງານຂະແໜງຂົນສົ່ງທາງບົກ.
3. ເປັນເຈົ້າການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານດ້ານຂົນສົ່ງທາງບົກຂອງພະແນກ ຍທຂ ນະຄອນຫລວງ ແລະບັນດາເມືອງທົດລອງ ໃຫ້ມີຄວາມເປັນເອກະພາບ, ຍຸຕິທໍາ ແລະໂປ່ງໃສ.
4. ສ້າງ ແລະພັດທະນາບຸກຄະລາກອນໃນຂະແໜງການຂົນສົ່ງທາງບົກ.
5. ພົວພັນ ແລະຮ່ວມມືກັບຕ່າງປະເທດເປັນຕົ້ນ ເຈລະຈາ, ເຊັນສັນຍາ, ຄຸ້ມຄອງ, ກວດກາການເຄື່ອນໄຫວວຽກງານການຕ່າງປະເທດ ແລະການປະຕິບັດສັນຍາ.
6. ຄົ້ນຄ້ວາ, ເຜີຍແຜ່ ແລະນໍາໃຊ້ວິທະຍາສາດ-ເຕັກໂນໂລຊີໃໝ່ເຂົ້າໃນຂະແໜງການຂົນສົ່ງທາງບົກ.
7. ຄົ້ນຄ້ວາ ແລະຂຸດຄົ້ນແຫລ່ງລາຍຮັບວິຊາການຂອງຂະແໜງຂົນສົ່ງ.
8. ຄົ້ນຄ້ວາ ແລະດໍາເນີນການຈັດພິມທະບຽນຍານພາຫະນະ ແລະໃບຂັບຂີ່ຖາວອນຂອງບັນດາແຂວງໃຫ້ລວມສູນເປັນເອກະພາບໃນທົ່ວປະເທດ ໂດຍອີງໃສ່ທ່າແຮງຂອງທ້ອງຖິ່ນ.

9. ຄົ້ນຄ້ວາ ແລະສ້າງຕັ້ງສູນກວດສອບມາດຖານເຕັກນິກຍານພາຫະນະທີ່ຜະລິດພາຍໃນ ຫລືນຳເຂົ້າຈາກຕ່າງປະເທດ ເພື່ອຢຸດຕິການອອກໃບອະນຸຍາດ ທາງດ້ານເຕັກນິກຍານພາຫະນະຂົນສົ່ງທາງບົກ.
10. ຄົ້ນຄ້ວານະໂຍບາຍ ແລະກຳນົດໂຄງສ້າງລາຄາຄ່າຂົນສົ່ງທາງບົກ ເພື່ອນຳສະເໜີລັດຖະບານພິຈາລະນາຮັບຮອງ.
11. ສ້າງຫລັກສູດ, ປື້ມຄູ່ມືການສິດສອນ ສຳລັບໂຮງຮຽນສອນຂັບລົດ ແລະຝຶກອົບຮົມທາງດ້ານວິຊາການກ່ຽວກັບການສິດສອນການຂັບຂີ່ຍານພາຫະນະ.
12. ຄຸ້ມຄອງການຂຶ້ນທະບຽນພາຫະນະຂົນສົ່ງທາງບົກ ແລະອະນຸຍາດອອກໃບຂັບຂີ່ຖາວອນພາຍໃນນະຄອນຫລວງວຽງຈັນ.
13. ຄົ້ນຄ້ວາ, ອອກໃບອະນຸຍາດ ແລະຂຶ້ນທະບຽນດຳເນີນທຸລະກິດຂົນສົ່ງທາງບົກລະຫວ່າງແຂວງ ແລະລະຫວ່າງປະເທດ.
14. ຄົ້ນຄ້ວາ, ອອກອະນຸຍາດການຂົນສົ່ງພິເສດ ແລະຂົນສົ່ງວັດຖຸອັນຕະລາຍ.

**II. ພະແນກ ຍທຂ ນະຄອນຫລວງວຽງຈັນ ຮັບຜິດຊອບ:**

1. ຈັດຕັ້ງປະຕິບັດບັນດາກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງ, ກົດລະບຽບ ແລະຂໍ້ກຳນົດ, ມາດຕະຖານເຕັກນິກຂອງພາຫະນະ, ໂຄງສ້າງລາຄາທົ່ວໜ່ວຍຂອງກະຊວງ ຍທຂ.
2. ວາງແຜນຍຸດທະສາດ, ແຜນພັດທະນາພື້ນຖານໂຄງລ່າງ, ການອຳນວຍຄວາມສະດວກ ແລະການບໍລິການທາງດ້ານການຂົນສົ່ງທາງບົກເປັນແຕ່ລະໄລຍະ ໃນຂົງເຂດທີ່ຕົນຮັບຜິດຊອບ.
3. ຄຸ້ມຄອງ ແລະອອກອະນຸຍາດດຳເນີນທຸລະກິດ ກ່ຽວກັບຂະແໜງການຂົນສົ່ງທາງບົກພາຍໃນນະຄອນຫຼວງວຽງຈັນໃນແຕ່ລະປີ.
4. ອອກອະນຸຍາດໃຫ້ຂະບວນລົດນຳທ່ຽວ (ຄາລາວານ) ຂອງຕ່າງປະເທດທີ່ມີຈຸດປະສົງເຂົ້າມາທ່ອງທ່ຽວພາຍໃນນະຄອນຫລວງວຽງຈັນ.
5. ຄຸ້ມຄອງສະຖານີຕິດຊັ່ງນ້ຳໜັກ ແລະຄວບຄຸມລົດຂົນສົ່ງບັນທຸກໜັກ.
6. ເປັນເຈົ້າການໃນການຄຸ້ມຄອງການຂົນສົ່ງສິນຄ້າ ແລະໂດຍສານທາງບົກ, ການຂຶ້ນທະບຽນພາຫະນະກົນຈັກ, ຄວາມປອດໄພໃນການຈະລາຈອນທາງບົກ ແລະການຂັບຂີ່, ໂຮງຮຽນສອນຂັບລົດ, ການສອບເສັງໃບຂັບຂີ່, ສູນກວດກາເຕັກນິກ, ອູ່ສ້ອມແປງທີ່ຮ່ວມທຶນກັບຕ່າງປະເທດ, ບໍລິສັດຂາຍປີ້ໂດຍສານທາງບົກ, ສະຖານີຂົນສົ່ງຜູ້ໂດຍສານ, ສິນຄ້າ ແລະສະມາຄົມລົດຂົນສົ່ງພາຍໃນນະຄອນຫລວງວຽງຈັນ.
7. ຕິດຕາມ, ຊຸກຍູ້ ແລະກວດກາວຽກງານການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນນະຄອນຫລວງວຽງຈັນ.
8. ສ້າງບົດສະເໜີໂຄງການເພື່ອຄົ້ນຄວ້າຊອກແຫລ່ງທຶນພາຍໃນ ແລະຕ່າງປະເທດ ມາພັດທະນາໃນວຽກງານຂະແໜງການຂົນສົ່ງ.

9. ປະມູນ, ຈັດຊື້-ຈັດຈ້າງ ໃນການປະກອບ ແລະຕິດຕັ້ງປ້າຍສັນຍານຈະລາຈອນ ຕາມເສັ້ນທາງໃນນະຄອນຫລວງວຽງຈັນ.
10. ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າຄອງນະຄອນຫລວງ ແລະກະຊວງ ຍທຂ ເປັນປະຈຳເດືອນ, ງວດ ແລະປະຈຳປີ.

## III. ຫ້ອງການ ຍທຂ 3 ເມືອງເປົ້າໝາຍຮັບຜິດຊອບ.

1. ຜັນຂະຫຍາຍກົດໝາຍ, ດຳລັດ, ມະຕິຕົກລົງ, ຄຳສັ່ງ, ກົດລະບຽບ, ຂໍ້ກຳນົດ, ມາດຕະຖານເຕັກນິກ, ແລະລາຄາຫົວໜ່ວຍຂອງກະຊວງ ຍທຂ.
2. ຈັດຕັ້ງປະຕິບັດແຜນພັດທະນາວຽກງານຂົນສົ່ງໃນແຕ່ລະໄລຍະ ໃນຂອບເຂດເມືອງຂອງຕົນໂດຍອີງໃສ່ແຜນພັດທະນາຂອງພະແນກ ຍທຂ ນະຄອນຫຼວງວຽງຈັນ.
3. ເກັບກຳສັງລວມຂໍ້ມູນສະຖິຕິຂອງຂະແໜງການຂົນສົ່ງໃນຂອບເຂດເມືອງຂອງຕົນ.
4. ອອກທະບຽນລົດໄຖນາໃຫຍ່, ລົດໄຖນາເດີນຕາມ, ລົດສາມລໍ້ຖີບ, ລົດຖີບ ແລະລໍ້ຍູ້.
5. ຈັດຕັ້ງຂຶ້ນທະບຽນລົດຈັກ 2 ລໍ້ ແລະສະເໜີອອກໃບທະບຽນ ໂດຍສົມທົບກັບກອງຄຸ້ມຄອງພາຫະນະແລະການຂັບຂີ່.
6. ຈັດຕັ້ງການສອບເສັງໃບຂັບຂີ່ປະເພດລົດຈັກ (2 ລໍ້) ພາຍໃນເມືອງ, ໂດຍການແຕ່ງຕັ້ງຄະນະກຳມະການສອບເສັງຂັ້ນເມືອງ ແລ້ວນຳສົ່ງຂໍ້ມູນໃຫ້ກອງຄຸ້ມຄອງພາຫານະເພື່ອອອກໃບຂັບຂີ່ຖາວອນ.
7. ອອກອະນຸຍາດການດຳເນີນທຸລະກິດການລົງທຶນພາຍໃນເຊັ່ນ: ຮ້ານສ້ອມແປງລົດທຸກປະເພດ, ເສາະຈອດພື້ນສີລົດ,ຈອດຢາງລົດໃຫຍ່ທຸກປະເພດ, ສາມລໍ້ຖີບ, ລ້າງອັດສີດ, ໂຮງຊຸ່ງນ, ໂຮງກຶງ, ຈອດລ້າງໝໍ້ນ້ຳ ແລະຢຳເບກ-ຄາດ, ລົດຈັກ, ລົດຖີບໃຫ້ເຊົ່າ, ຮ້ານຂາຍເຄື່ອງອາໄຫລ່ ແລະຮ້ານຕົບແຕ່ງລົດ.
8. ຈັດສັນບ່ອນຈອດລົດຢູ່ຕາມສະຖານທີ່ຕ່າງໆເຊັ່ນ: ບໍລິເວນຕະຫຼາດ, ໂຮງຮຽນ, ໂຮງໝໍ, ຮ້ານອາຫານ, ສວນສາທາລະນະ ແລະອື່ນໆ ພ້ອມທັງຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດເມືອງຂອງຕົນ.
9. ຕິດຕາມ, ກວດກາ, ຄຸ້ມຄອງການຕິດຕັ້ງ ແລະສ້ອມແປງປ້າຍສັນຍານຈະລາຈອນຕ່າງໆ, ໄຟແສງສະຫວ່າງເບືອງທາງຕາມຖະໜົນໃນເມືອງຂອງຕົນ.
10. ເກັບກຳ, ສັງລວມຂໍ້ມູນສະຖິຕິຂອງຂະແໜງການຂົນສົ່ງ.
11. ສົມທົບກັບພາກສ່ວນກ່ຽວຂ້ອງລົງໂຄສະນາ, ເຜີຍແຜ່ກົດລະບຽບ, ປຸກຈິດສຳນຶກເພື່ອຫຼຸດຜ່ອນການເກີດອຸປະຕິເຫດຕາມທ້ອງຖະໜົນ, ຢູ່ຕາມໂຮງຮຽນ, ໂຮງຈັກ, ໂຮງງານ, ກຸ່ມບ້ານຕ່າງໆ ຢູ່ໃນເມືອງຂອງຕົນ.
12. ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານໃຫ້ເຈົ້າເມືອງ ແລະ ພະແນກ ຍທຂ ນະຄອນຫລວງວຽງຈັນເປັນປະຈຳເດືອນ, ງວດ ແລະປະຈຳປີ.

## IV. ຜົນສັກສິດ:

1. ບົດບັນທຶກສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

2. ພາຍຫລັງທີ່ໄດ້ລົງລາຍເຊັນແລ້ວ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກະກຽມຄວາມພ້ອມດ້ານຕ່າງໆ ໂດຍສະເພາະແມ່ນດ້ານບຸກຄະລາກອນ, ແຜນການ ແລະງົບປະມານ ເພື່ອຈັດຕັ້ງປະຕິບັດເນື້ອໃນຂອງບົດບັນທຶກສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ຫົວໜ້າກົມຂົນສົ່ງ**

**ຫົວໜ້າພະແນກ ຍທຂ**
**ນະຄອນຫລວງວຽງຈັນ**

**ຫົວໜ້າຫ້ອງການ ຍທຂ**
**ເມືອງສີສັດຕະນາກ**

**ຫົວໜ້າຫ້ອງການ ຍທຂ**
**ເມືອງຈັນທະບູລີ**

**ຫົວໜ້າຫ້ອງການ ຍທຂ**
**ເມືອງສັງທອງ**